# ໝວດ 1

ບົດທີ 1 ການຄືນພະຊົນ

ບົດທີ 2 ຫຼັກຖານທີ່ພະເຢຊູຄືນຈາກຕາຍ (ພາກຕົ້ນ)

ບົດທີ 3 ຫຼັກຖານທີ່ພະເຢຊູຄືນຈາກຕາຍ (ພາກປາຍ)

## ເປົ້າໝາຍ

ເມື່ອທ່ານຮຽນຈາກ ໝວດນີ້ແລ້ວທ່ານຈະມີຄວາມສາມາດດັ່ງຕໍ່ໄປນີ້:

1. ຫຼັງຈາກພະເຢຊູຄືນຈາກຕາຍ ພະອົງປາກົດໃຫ້ເຫັນ 10 ເທື່ອ. ທ່ານຈະສາມາດ ກ່າວເລື່ອງທັງ 10 ເທື່ອນັ້ນທັງຈະຮູ້ສະຖານທີ່ແລະຈຳນວນຄົນທີ່ເຫັນພະອົງດ້ວຍ. ທ່ານຈະຮູ້ເຫດທີ່ເຮົາຈະຍົກເລື່ອງການຄືນພະຊົນໃນຄຳ ເທດສະ ໜາຂອງເຮົາ ທຸກວັນນີ້.
2. ທ່ານຈະສາມາດຍົກຫຼັກຖານ 3 ປະການທີ່ເຮົາຮູ້ໄດ້ວ່າພະອົງຄືນຈາກຕາຍ. ທ່ານ ຈະສາມາດສະແດງໃຫ້ຜູ້ອື່ນຮູ້ວ່າ ບໍ່ແມ່ນ ເຂົາມາລັກພະສົບຂອງພະອົງໄປ ບໍ່ແມ່ນ ເຂົາຄິດເຫັນໄປເອງ ທັງບໍ່ແມ່ນວ່າພະເຢຊູມາວຽນຕາຍວຽນ ເກີດ ພະອົງເອງຄືນມາ ແທ້.
3. ອີງຕາມ 1 ໂກລິນໂທ 15:14-20 ເຫັນວ່າເປັນການສຳຄັນຫຼາຍທີ່ເຮົາຈະຮູ້ວ່າ ພະ ເຢຊູຄືນມາຈາກຕາຍແທ້.
4. ທ່ານຈະຮຽນຮູ້ເລື່ອງຄົນສອງພວກທີ່ເຫັນຮູ້ເລື່ອງການຄືນພະຊົນແລ້ວປ່ຽນທ່າທີເຂົາ ດ້ວຍ.